# ຄະນະຊາວໜຸ່ມທະນາຄານແຫ່ງ ສປປ ລາວ ສຶກສາ ແລະ ຮ່ຳຮຽນມູນເຊື້ອ ແລະ ວິລະກຳອັນລ້ຳເລີດຂອງບັນດາຜູ້ນຳຂອງການປະຕິວັດລາວ





ຄະນະຊາວໜຸ່ມທະນາຄານແຫ່ງ ສປປ ລາວ ເຊິ່ງນຳໂດຍສະຫາຍ ດຣ ອາຄົມ ປູະເສີດ ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະຊາວໜຸ່ມທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະຈຳນວນ 31 ສະຫາຍ ໄດ້ຮ່ວມກັນສືບຕໍ່ສຶກສາ-ຄົ້ນຄ້ວາ ແລະ ຮ່ຳຮຽນເອົາມູນເຊື້ອ ແລະ ແບບແຜນດຳລົງຊີວິດອັນປອດໃສ-ຂາວສະອາດ, ຄວາມອົງອາດກ້າຫານ ແລະ ຄວາມສະຫຼາດສ່ອງໃສຂອງຜູ້ນຳຂອງການປະຕິວັດລາວໃນການຊີ້ນຳ-ບັນຊາກອງທັບ ແລະ ປະຊາຊົນລາວໄປສູ່ໄຊຊະນະ ແລະ ສະຖາປະນາ ສປປ ລາວ ໃນວັນທີ 2 ທັນວາ 1975.

ໃນຕອນເຊົ້າຂອງວັນທີ່ 9 ກຸມພາ 2012 ຜ່ານມານີ້, ທີ່ຫ້ອງການກອງບັນຊາການທະຫານແຂວງຫົວພັນ ຄະນະນຳອົງການຈັດຕັ້ງມະຫາຊົນ ໂດຍສະເພາະອົງການຈັດຕັ້ງຊາວໜຸ່ມທະນາຄານແຫ່ງ ສປປ ລາວ ໄດ້ເຄື່ອນໄຫວເຮັດວຽກ ແລະ ຢ້ຽມຢາມແຂວງຫົວພັນ ເຊິ່ງໃນໂອກາດດັ່ງກ່າວ ຄະນະນຳຊາວໜຸ່ມກໍໄດ້ມອບເຄື່ອງຮັບໃຊ້ຫ້ອງການ ແລະ ເຄື່ອງກິລາຈຳນວນໜຶ່ງລວມມູນຄ່າ 40 ກວ່າລ້ານກີບ ໃນນີ້ມີເງິນສົດ 30.000.000 ກີບ, ຄອມພິວເຕີຕັ້ງໂຕະ 1 ຊຸດ, ປື້ມຂຽນ 2.000 ຫົວ, ສົ້ງ-ເສື້ອກິລາ 10 ຊຸດ, ບານສົ່ງ 3 ໜ່ວຍ ແລະ ຕາໜ່າງ 1 ອັນ, ນ້ຳດື່ມໂອວັນຕິນອີກຈຳນວນໜຶ່ງ.

ການມອບເຄື່ອງໃນຄັ້ງນີ້ຕາງໜ້າໃຫ້ອົງການຈັດຕັ້ງມະຫາຊົນໂດຍແມ່ນສະຫາຍ ດຣ ອາຄົມ ປູະເສີດ ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະຊາວໜຸ່ມທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ, ກ່າວຮັບໂດຍແມ່ນສະຫາຍ ພັນໂທ ບຸນພອນ ຢອງສົມແພງ ຄະນະພັກກອງບັນຊາການ, ຫົວໜ້າຫ້ອງການເມືອງກອງບັນຊາການທະຫານແຂວງຫົວພັນ ພ້ອມດ້ວຍບັນດານາຍທະຫານ, ຄະນະນຳຊາວໜຸ່ມຂອງກອງບັນຊາການທະຫານແຂວງຫົວພັນ ແລະ ຄະນະຊາວໜຸ່ມທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມຢ່າງພ້ອມພຽງ.

ພາຍຫຼັງທີ່ສຳເລັດພິທີມອບເຄື່ອງແລ້ວບັນດາຄະນະນຳ ແລະ ສະມາຊິກຊາວໜຸ່ມກໍໄດ້ເຂົ້າຮ່ວມພາເຂົ້າສາມາຄີ ເຊິ່ງໄດ້ດຳເນີນໄປດ້ວຍບັນຍາກາດເບີກບານມ່ວນຊື່ນ, ຈາກນັ້ນຄະນະຊາວທະນາຄານແຫ່ງ ສປປ ລາວ ກໍໄດ້ໄປທັດສະນະສຶກສາໃນຕົວເມືອງຊຳເໜືອ ແລະ ໃນວັນຕໍ່ມາຂະບວນຊາວໜຸ່ມທະນາຄານແຫ່ງ ສປປ ລາວ ກໍໄດ້ສຶກສາຄົ້ນຄວ້າ ແລະ ຮ່ຳຮຽນເອົາມູນເຊື້ອແຫ່ງການຕໍ່ສູ້ອັນພິລະອາດຫານຂອງກອງທັບ ແລະ ປະຊາຊົນລາວ ໂດຍສະເພາະເຂົ້າສຶກສາຮ່ຳຮຽນເອົາແບບແຜນດຳລົງຊີວິດຂອງບັນດາທ່ານຜູ້ນຳຂອງການປະຕິວັດໂດຍສະເພາະກໍແມ່ນແບບແຜນດຳລົງຊີວິດທີ່ລຽບງ່າຍ ແລະ ເດັດຂາດຂອງປະທານ ໄກສອນ ພົມວິຫານ ລູກຜູ້ປະເສີດຂອງປະຊາຊົນລາວ, ຜູ້ນຳແຫ່ງການສ້າງຕັ້ງພັກຂອງຊົນຊັ້ນກຳມະກອນ, ລັດແບບໃໝ່ ແລະ ກອງທັບປະຕິວັດ ບົນດິນແດນປະເທດລາວ.